ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 263 /ລບ
ນະຄອນຫຼວງວຽງຈັນ, ວັນທີ 09 / 05 / 25

# ດຳລັດ
# ວ່າດ້ວຍກອງທຶນຄວາມປອດໄພທາງລົດໄຟ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການລົດໄຟ ສະບັບເລກທີ 62/ສພຊ, ລົງວັນທີ 17 ທັນວາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 207/ຍທຂ, ລົງວັນທີ 02 ເມສາ 2025.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການ ຄຸ້ມຄອງ, ນຳໃຊ້ ແລະ ກວດກາ ກອງທຶນຄວາມປອດໄພທາງລົດໄຟ ເພື່ອລະດົມ ແລະ ສະສົມທຶນ ແນໃສ່ສະໜອງທຶນໃຫ້ແກ່ວຽກງານຄວາມປອດໄພທາງລົດໄຟ ໃຫ້ມີຄວາມຍືນຍົງ, ໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 2 ກອງທຶນຄວາມປອດໄພທາງລົດໄຟ**

ກອງທຶນຄວາມປອດໄພທາງລົດໄຟ ຂຽນຫຍໍ້ວ່າ "ກຄຟ" ແມ່ນກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນເພື່ອສະສົມ ແລະ ລະດົມທຶນຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນໃຫ້ມີງົບປະມານພຽງພໍ, ຍືນຍົງ ແລະ ນຳໃຊ້ເຂົ້າໃນວຽກງານຄວາມປອດໄພທາງລົດໄຟ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຈົ້າໜ້າທີ່ລົດໄຟ** ໝາຍເຖິງ ຕຳຫຼວດລົດໄຟ ແລະ ເຈົ້າໜ້າທີ່ກວດກາການແລ່ນລົດໄຟ;

2. **ຕຳຫຼວດລົດໄຟ** ໝາຍເຖິງ ເຈົ້າໜ້າທີ່ຈາກ ກະຊວງປ້ອງກັນຄວາມສະຫງົບ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍໃຫ້ປະຕິບັດໜ້າທີ່ໃນ ຂະບວນ, ສະຖານີ ແລະ ແລວທາງ ລົດໄຟ ໃນການ ຄວບຄຸມ, ຮັກສາ ຄວາມສະຫງົບ, ຄວາມເປັນລະບຽບ ແລະ ຄວາມປອດໄພ, ກວດກາວັດຖຸເຄື່ອງຂອງທີ່ ເກືອດຫ້າມ ຫຼື ຜິດກົດໝາຍ ພ້ອມທັງແກ້ໄຂເຫດການທີ່ເກີດຂຶ້ນ;

3. ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ໝາຍເຖິງ ພະນັກງານ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ ທີ່ຖືກແຕ່ງຕັ້ງ ຫຼື ມອບໝາຍ ໂດຍລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອປະຕິບັດໜ້າທີ່ ໃນການອໍານວຍຄວາມສະດວກ, ຄຸ້ມຄອງ, ກວດກາຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂະບວນ, ສະຖານີ ແລະ ແລວທາງ ລົດໄຟ;

4. ຄວາມປອດໄພທາງລົດໄຟ ໝາຍເຖິງ ການປ້ອງກັນ ແລະ ຮັກສາຄວາມປອດໄພ ຕາມ ຂະບວນ, ສະຖານີ ແລະ ແລວທາງລົດໄຟ;

5. ຄ່າຊຸກເພີ່ມ ໝາຍເຖິງ ການເກັບເພີ່ມຈາກ ລາຄາການຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ທາງລົດໄຟ ເພື່ອເອົາເຂົ້າກອງທຶນ ຕາມອັດຕາທີ່ ລັດຖະບານ ໄດ້ກໍານົດແຕ່ລະໄລຍະ;

6. ຄ້າຍ ໝາຍເຖິງ ສະຖານທີ່ຕັ້ງຂອງກໍາລັງ ປກສ, ປກຊ ທີ່ ປະຕິບັດໜ້າທີ່ ປ້ອງກັນຄວາມປອດໄພ ຕາມແລວທາງລົດໄຟ;

7. ທາງລາດຕະເວນ ໝາຍເຖິງ ເສັ້ນທາງຕາມແລວທາງລົດໄຟ ທີ່ ເຈົ້າໜ້າທີ່ ປກສ, ປກຊ ເຄື່ອນໄຫວ ຕິດຕາມ ກວດກາ ສະພາບຄວາມປອດໄພຂອງການຂົນສົ່ງທາງລົດໄຟ.

**ມາດຕາ 4 ຫຼັກການ ຄຸ້ມຄອງ ແລະ ນໍາໃຊ້ ກອງທຶນ**

ການ ຄຸ້ມຄອງ ແລະ ນໍາໃຊ້ ກຄຟ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ມີຄວາມ ຄ່ອງຕົວ, ວ່ອງໄວ, ຍຸຕິທໍາ, ໂປ່ງໃສ ແລະ ຮັບປະກັນລາຍຈ່າຍຕາມແຜນການປະຈໍາປີ;

2. ຖືກຕ້ອງຕາມ ເປົ້າໝາຍ, ປະຢັດ, ມີປະສິດທິພາບ, ,ມີປະສິດທິຜົນ ແລະ ມີຄວາມຍືນຍົງ;

3. ມີການ ກວດກາ ແລະ ກວດສອບ ຢ່າງເປັນປົກກະຕິ, ຖືກຕ້ອງ ແລະ ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນໍາໃຊ້ ກອງທຶນ

**ມາດຕາ 5 ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບຂອງ ກຄຟ ມີດັ່ງນີ້:

1. ຄ່າຊຸກເພີ່ມຈາກ ອັດຕາຄ່າຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າທາງລົດໄຟ ຕາມການກໍານົດຂອງລັດຖະບານ ແຕ່ລະໄລຍະ;

2. ຄ່າຊຸກເພີ່ມຈາກ ການບໍລິການຂົນສົ່ງສິນຄ້າທາງລົດໄຟຜ່ານແດນ;

3. ຄ່າປັບໃໝຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ;

4. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງ ລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;

5. ດອກເບ້ຍເງິນຝາກ ກຄຟ;

6. ລາຍຮັບອື່ນທີ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ.

**ມາດຕາ 6 ເປົ້າໝາຍການນໍາໃຊ້ກອງທຶນ**

ກອງທຶນຄວາມປອດໄພທາງລົດໄຟ ນໍາໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ຫ້ອງການ ເຈົ້າໜ້າທີ່ລົດໄຟ ແລະ ກໍາລັງປ້ອງກັນຊາດ, ຄ້າຍ, ທາງເຂົ້າຄ້າຍ, ປ້ອມຍາມ, ທາງລາດຕະເວນ ແລະ ສິ່ງອໍານວຍຄວາມສະດວກອື່ນ ກ່ຽວກັບວຽກງານຄວາມປອດໄພທາງລົດໄຟ;

2. ລົງ ເຄື່ອນໄຫວ ແລະ ແກ້ໄຂ ວຽກງານຄວາມປອດໄພທາງລົດໄຟ;

3. ສະໜອງ ຍານພາຫະນະ, ເຄື່ອງມື ແລະ ວັດຖຸປະກອນ ທີ່ຈຳເປັນໃຫ້ ເຈົ້າໜ້າທີ່ລົດໄຟ ແລະ ກຳລັງປ້ອງກັນຊາດ;

4. ຈັດ ກອງປະຊຸມ, ຝຶກອົບຮົມ-ຫັດແອບ ກ່ຽວກັບ ວຽກງານຄວາມປອດໄພທາງລົດໄຟ;

5. ໃຊ້ຈ່າຍເຂົ້າໃນການຄຸ້ມຄອງບໍລິຫານ ກຄຟ;

6. ໃຊ້ຈ່າຍເຂົ້າໃນວຽກງານຄວາມປອດໄພທາງລົດໄຟອື່ນ ຕາມການຕົກລົງຂອງສະພາບໍລິຫານ ກຄຟ.

**ມາດຕາ 7 ການເບີກຈ່າຍເງິນກອງທຶນ**

ການເບີກຈ່າຍເງິນ ກຄຟ ຕ້ອງປະຕິບັດ ດັ່ງນີ້:

1. ທຸກການເບີກຈ່າຍເງິນ ກຄຟ ຕ້ອງຢູ່ໃນແຜນລາຍຮັບ-ລາຍຈ່າຍປະຈຳປີ ທີ່ໄດ້ຜ່ານການຮັບຮອງຈາກສະພາບໍລິຫານ ກຄຟ, ຍົກເວັ້ນກໍລະນີເກີດເຫດການສຸກເສີນ;

2. ທຸກເປົ້າໝາຍໃນການເບີກຈ່າຍເງິນ ກຄຟ ບໍ່ໃຫ້ຊໍ້າຊ້ອນກັບແຫຼ່ງທຶນອື່ນ;

ໃນກໍລະນີ ເກີດເຫດການສຸກເສີນກ່ຽວກັບຄວາມປອດໄພທາງລົດໄຟ ໃຫ້ໜ່ວຍງານທີ່ກ່ຽວຂ້ອງສະເໜີຕໍ່ກອງເລຂາ ກຄຟ ຄົ້ນຄວ້າ ແລ້ວນຳສະເໜີຕໍ່ສະພາບໍລິຫານ ກຄຟ ພິຈາລະນາຮັບຮອງ.

**ມາດຕາ 8 ການຖອນເງິນກອງທຶນ**

ການຖອນເງິນ ກຄຟ ຈາກບັນຊີເງິນຝາກຂອງ ກຄຟ ຕ້ອງປະຕິບັດຕາມ ແຜນການ, ແຜນງານ, ໂຄງການ ທີ່ຖືກຮັບຮອງໂດຍສະພາບໍລິຫານ ກຄຟ ແລະ ຖືກຕ້ອງຕາມລະບຽບການຂອງ ກຄຟ ແລະ ລະບຽບການຂອງກະຊວງການເງິນ. ການຖອນເງິນຂອງ ກຄຟ ແຕ່ລະຄັ້ງ ຕ້ອງມີສອງລາຍເຊັນຂອງຜູ້ທີ່ໄດ້ຮັບມອບສິດຈາກສະພາບໍລິຫານ ກຄຟ.

ການຖອນເງິນຂອງ ກຄຟ ບໍ່ສາມາດຖອນໄດ້ໝົດ ແລະ ຕ້ອງຮັກສາໄວ້ສິບສ່ວນຮ້ອຍ ໃນບັນຊີເງິນຝາກຂອງ ກຄຟ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນ

**ມາດຕາ 9 ໂຄງປະກອບການຈັດຕັ້ງກອງທຶນ**

ໂຄງປະກອບການຈັດຕັ້ງຂອງ ກຄຟ ປະກອບດ້ວຍ:

1. ສະພາບໍລິຫານ;

2. ກອງເລຂາ.

**ມາດຕາ 10 ສະພາບໍລິຫານກອງທຶນ**

ສະພາບໍລິຫານ ກຄຟ ແມ່ນການຈັດຕັ້ງທີ່ບໍ່ປະຈຳການ ທີ່ໄດ້ຮັບການແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ມີພາລະບົດບາດ ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ການເຄື່ອນໄຫວຂອງ ກຄຟ.

ສະພາບໍລິຫານ ກຄຟ ມີວາລະບໍລິຫານກອງທຶນ ຫ້າ ປີ.

**ມາດຕາ 11 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນ**

ໂຄງປະກອບບຸກຄະລາກອນຂອງ ສະພາບໍລິຫານ ກຄຟ ປະກອບດ້ວຍ:

1. ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນປະທານ;

2. ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ;

3. ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ເປັນຮອງປະທານ;
4. ຜູ້ຕາງໜ້າ ກະຊວງການເງິນ ເປັນຄະນະ;
5. ຫົວໜ້າກົມຕໍາຫຼວດລົດໄຟ ກົມໃຫຍ່ຕໍາຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
6. ຫົວໜ້າກົມສູ້ຮົບ ກົມໃຫຍ່ເສນາທິການ ກະຊວງປ້ອງກັນປະເທດ ເປັນຄະນະ;
7. ຫົວໜ້າກົມແຜນການ ແລະ ການເງິນ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
8. ຫົວໜ້າກົມທາງລົດໄຟ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ ທັງເປັນ ຫົວໜ້າກອງເລຂາ.

ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານ ກຄຟ ສາມາດປັບປຸງ ແລະ ປ່ຽນແປງຕາມຄວາມຈໍາເປັນ ຕາມການສະເໜີຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

ບຸກຄະລາກອນຂອງສະພາບໍລິຫານ ກຄຟ ຈະບໍ່ໄດ້ຮັບເງິນເດືອນ ແລະ ຄ່າແຮງງານ ໃນການປະຕິບັດໜ້າທີ່ຂອງຕົນ ນອກຈາກເບ້ຍປະຊຸມ ແລະ ເງິນນະໂຍບາຍຕາມລະບຽບການ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນ**

ສະພາບໍລິຫານ ກຄຟ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນໍາພາ, ຊີ້ນໍາ, ຊຸກຍູ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຂອງກອງເລຂາ ກຄຟ;
2. ພິຈາລະນາ ແລະ ຮັບຮອງ ແຜນການເຄື່ອນໄຫວ, ບົດລາຍງານ ແລະ ແຜນລາຍຮັບ-ລາຍຈ່າຍປະຈໍາປີຂອງ ກຄຟ;
3. ພິຈາລະນາຮັບຮອງເອົາລະບຽບການຂອງ ກຄຟ;
4. ແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ກອງເລຂາ ກຄຟ;
5. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງ ກຄຟ;
6. ລະດົມແຫຼ່ງທຶນຈາກ ພາຍໃນ ແລະ ຕ່າງປະເທດ ເພື່ອປະກອບໃຫ້ ກຄຟ;
7. ຕິດຕາມ ກວດກາ ແລະ ປະເມີນຜົນການນໍາໃຊ້ເງິນ ກຄຟ ໃຫ້ຖືກຕ້ອງຕາມ ເປົ້າໝາຍ ແລະ ແຜນການ ຢ່າງມີປະສິດທິຜົນ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງ ກຄຟ ຕໍ່ລັດຖະບານຢ່າງເປັນປົກກະຕິ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການຂອງ ກຄຟ.

**ມາດຕາ 13 ກອງປະຊຸມສະພາບໍລິຫານກອງທຶນ**

ກອງປະຊຸມສະພາບໍລິຫານ ກຄຟ ຈັດຂຶ້ນຢ່າງໜ້ອຍສອງຄັ້ງຕໍ່ປີ, ໃນກໍລະນີ ມີບັນຫາສໍາຄັນ ທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ກຄຟ, ມີສະມາຊິກສະພາບໍລິຫານ ກຄຟ ເຂົ້າຮ່ວມແຕ່ສອງສ່ວນສາມຂຶ້ນໄປ. ມະຕິຂອງກອງປະຊຸມສະພາບໍລິຫານ ກຄຟ ຈະມີຜົນບັງຄັບໃຊ້ ກໍຕໍ່ເມື່ອໄດ້ຮັບການຮັບຮອງຈາກສຽງສ່ວນຫຼາຍຂອງສະມາຊິກສະພາບໍລິຫານ ກຄຟ ທີ່ເຂົ້າຮ່ວມກອງປະຊຸມ.

ໃນກໍລະນີ ປະທານສະພາບໍລິຫານ ກຄຟ ບໍ່ຢູ່ ຫຼື ຕິດຂັດ ແມ່ນໃຫ້ຮອງປະທານສະພາບໍລິຫານ ກຄຟ ຜູ້ທີ່ຖືກມອບໝາຍເປັນຜູ້ປະຕິບັດໜ້າທີ່ແທນ.

**ມາດຕາ 14 ກອງເລຂາ**

ກອງເລຂາ ກຄຟ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ວິຊາການຊ່ວຍວຽກຈໍານວນໜຶ່ງ, ຖືກແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ໂດຍ ປະທານສະພາບໍລິຫານ ກຄຟ.

ຫົວໜ້າ ແລະ ຮອງຫົວໜ້າ ກອງເລຂາ ກຄຟ ມີ ຕໍາແໜ່ງບໍລິຫານ ດັ່ງນີ້:

1. ຫົວໜ້າກອງເລຂາ ກຄຟ ທຽບເທົ່າຕໍາແໜ່ງບໍລິຫານປະເພດ 2;

2. ຮອງຫົວໜ້າກອງເລຂາ ກຄຟ ທຽບເທົ່າຕໍາແໜ່ງບໍລິຫານປະເພດ 3.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງກອງເລຂາ**

ກອງເລຂາ ກຄຟ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ສະພາບໍລິຫານ ກຄຟ ໃນການຄຸ້ມຄອງບໍລິຫານ ກຄຟ;
2. ຄຸ້ມຄອງບໍລິຫານການເຄື່ອນໄຫວວຽກງານປະຈໍາວັນຂອງ ກຄຟ ໃຫ້ສອດຄ່ອງກັບແຜນການ;
3. ຄົ້ນຄວ້າສ້າງລະບຽບການກ່ຽວກັບການ ຄຸ້ມຄອງ, ບໍລິຫານ ແລະ ນໍາໃຊ້ ກຄຟ ເພື່ອສະເໜີຕໍ່ສະພາບໍລິຫານ ກຄຟ ພິຈາລະນາຮັບຮອງ;
4. ສ້າງ, ສັງລວມ ແລະ ສະເໜີ ແຜນການເຄື່ອນໄຫວ ແລະ ແຜນລາຍຮັບ-ລາຍຈ່າຍປະຈໍາປີຂອງ ກຄຟ ຕໍ່ສະພາບໍລິຫານ ກຄຟ ເພື່ອພິຈາລະນາຮັບຮອງ;
5. ຄຸ້ມຄອງ ຊັບສິນ, ເງິນສົດ ແລະ ບັນຊີເງິນຝາກ ຂອງ ກຄຟ;
6. ເບີກຈ່າຍງົບປະມານ ກຄຟ ຕາມແຜນລາຍຮັບ-ລາຍຈ່າຍປະຈໍາປີ ທີ່ສະພາບໍລິຫານ ກຄຟ ຮັບຮອງ;
7. ໂຄສະນາເຜີຍແຜ່ກ່ຽວກັບ ຄວາມໝາຍຄວາມສໍາຄັນ ແລະ ພາລະບົດບາດຂອງ ກຄຟ;
8. ຕິດຕາມ ກວດກາ ແລະ ປະເມີນຜົນການນໍາໃຊ້ ກຄຟ ຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;
9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໜ້າທີ່ຂອງຕົນໃຫ້ມີປະສິດທິຜົນ;
10. ພົວພັນຮ່ວມມືກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງສະພາບໍລິຫານ ກຄຟ;
11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຮອບດ້ານຂອງ ກຄຟ ຕໍ່ສະພາບໍລິຫານ ກຄຟ ຢ່າງເປັນປົກກະຕິ;
12. ສະຫຼຸບ ສັງລວມແຫຼ່ງ ລາຍຮັບ-ລາຍຈ່າຍ ຂອງກອງທຶນ ເປັນເອກະສານຊ້ອນທ້າຍ ຄັດຕິດບົດລາຍງານການເຄື່ອນໄຫວວຽກງານຮອບດ້ານຂອງ ກຄຟ ຕໍ່ສະພາບໍລິຫານ ກຄຟ ເພື່ອລາຍງານຕໍ່ລັດຖະບານໃນແຕ່ລະໄລຍະ;
13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການຂອງ ກຄຟ.

## ໝວດທີ 4
## ການບັນຊີ, ການກວດສອບ, ການກວດກາ ແລະ ການລາຍງານ

**ມາດຕາ 16 ການບັນຊີ**

ກອງທຶນຄວາມປອດໄພທາງລົດໄຟ ຕ້ອງມີລະບົບບັນຊີທີ່ຖືກຕ້ອງຕາມ ກົດໝາຍວ່າດ້ວຍການບັນຊີ ແລະ ສາມາດເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ ຕາມການເຫັນດີຂອງກະຊວງການເງິນ.

**ມາດຕາ 17 ການກວດສອບບັນຊີ**

ບັນຊີຂອງ ກຄຟ ມີການກວດສອບທຸກປີໂດຍ ອົງການກວດສອບແຫ່ງລັດ ຫຼື ຜູ້ກວດສອບອິດສະລະ. ໃນກໍລະນີ ຫາກພົບເຫັນວ່າມີການກະທໍາຜິດ ຜູ້ກະທໍາຜິດຕ້ອງຮັບຜິດຊອບຕາມກົດໝາຍ.

**ມາດຕາ 18 ການກວດກາກອງທຶນ**

ການກວດກາ ກຄຟ ແມ່ນການປະເມີນຜົນການເຄື່ອນໄຫວ ແລະ ການຄຸ້ມຄອງບໍລິຫານ ກຄຟ, ປະກອບດ້ວຍ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ;

2. ການກວດກາໂດຍການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

**ມາດຕາ 19 ການລາຍງານ**

ກອງເລຂາ ກຄຟ ຕ້ອງເຮັດບົດລາຍງານ ປະຈຳໄຕມາດ, ຫົກເດືອນ ແລະ ປະຈຳປີ ກ່ຽວກັບ ການຄຸ້ມຄອງ ແລະ ການນຳໃຊ້ ກຄຟ ລວມທັງ ແຫຼ່ງລາຍຮັບ-ລາຍຈ່າຍປະຈຳປີ. ບົດລາຍງານທຸກສະບັບຕ້ອງໄດ້ຮັບຮອງຈາກສະພາບໍລິຫານ ກຄຟ ກ່ອນນຳສົ່ງລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 20 ເຄື່ອງໝາຍ ແລະ ຕາປະທັບ**

ກອງທຶນຄວາມປອດໄພທາງລົດໄຟ ມີເຄື່ອງໝາຍ ແລະ ຕາປະທັບສະເພາະ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 21 ການຈັດຕັ້ງປະຕິບັດ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການຈັດຕັ້ງຜັນຂະຫຍາຍດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 18 ມິຖຸນາ 2025 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**